**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງພະລັງງານ ແລະ ບໍ່ແຮ່**

**ກົມບໍ່ແຮ່**

ເລກທີ............/ພບ.ກບຮ3

ນະຄອນຫຼວງວຽງຈັນ,ວັນທີ.......ມັງກອນ 2017

# ໃບຢັ້ງຢືນ ... ໃບຮັບຮອງບົດລາຍງານການສຶກສາ

# ຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂັ້ນລະອຽດ

- ອີງຕາມກົດໝາຍວ່າດ້ວຍແຮ່ທາດ, ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມບົດວິພາກເສດຖະກິດ-ເຕັກນິກ ຂັ້ນລະອຽດ ໂຄງການຂຸດຄົ້ນຫີນປູນ ເພື່ອສ້າງຕັ້ງໂຮງງານຜະລິດຊີມັງ 5,000 ໂຕນ/ວັນ ໃນເນື້ອທີ່ ..... ກມ$^2$ ຢູ່ເຂດບ້ານ....... ເມືອງ...... ແຂວງ...... ຂອງ ບໍລິສັດ ……..……. ສະບັບເລກທີ ຂາເຂົ້າກົມບໍ່ແຮ່ ……, ລົງວັນທີ ………..

ກົມບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ອອກໃບຮັບຮອງ ໂດຍມີເງື່ອນໄຂດັ່ງນີ້:

1. ຜູ້ລົງທຶນ ໄດ້ເຮັດສຳເລັດບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂັ້ນລະອຽດ ໂດຍສອດຄ່ອງ ກັບ ກົດໝາຍວ່າດ້ວຍແຮ່ທາດ ແລະ ບັນດາລະບຽບການ ຫຼື ບົດແນະນຳທີ່ກ່ຽວຂ້ອງ.
2. ບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂັ້ນລະອຽດ ນີ້, ຜູ້ລົງທຶນຈະສະໜອງໃຫ້ແກ່ພະນັກງານ ທີ່ຖືກມອບໝາຍຈາກກົມບໍ່ແຮ່ໄດ້ທຸກເວລາ.
3. ກົມບໍ່ແຮ່ ຮັບຮູ້ວ່າ ຈະບໍ່ຮັບຜິດຊອບໃດໆ ຕໍ່ຜູ້ລົງທຶນ ຫຼື ຝ່າຍທີ່ສາມ ຊຶ່ງເປັນຜູ້ທີ່ໄດ້ຮັບການສະເໜີບົດລາຍງານ ການສຶກສາ ຄວາມເປັນໄປໄດ້ ກ່ຽວກັບການນຳໃຊ້ໄດ້ຂອງບັນດາຂໍ້ມູນຂ່າວສານ ແລະ ການສູນເສຍ ຫຼື ການເສຍຫາຍ ໃດໜຶ່ງ ທີ່ເກີດຂຶ້ນຈາກການນຳໃຊ້, ການເຊື່ອໝັ້ນບົນພື້ນຖານ ຫຼື ຈາກການຕີຄວາມໝາຍຂອງບົດສຶກສານີ້.
4. ໃນກໍລະນີທີ່ມີການປ່ຽນແປງ, ການແກ້ໄຂ ຫຼື ການເພີ່ມເຕີມໃດໜຶ່ງ ໃສ່ຜົນຮັບຂອງບົດລາຍງານການສຶກສາຄວາມເປັນໄປ ໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂັ້ນລະອຽດນີ້ ຜູ້ລົງທຶນ ຕ້ອງໄດ້ຍື່ນສະເໜີ ແຈ້ງໃຫ້ກົມບໍ່ແຮ່ ຊາບກ່ຽວກັບການປັບປຸງ ບົດລາຍງານການ ສຶກສາຄວາມເປັນໄປໄດ້ໃຫ້ສອດຄ່ອງກັບສະພາບການອີກໃໝ່ ເພື່ອການຮັບຮອງ.

ໃບຮັບຮອງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກວ່າຈະມີການປ່ຽນແປງ.

ຫົວໜ້າກົມ

ໝາຍເຫດ:

- ຫ້າມປອມແປງ ຫຼື ດັດແກ້ຂໍ້ຄວາມໃດໆ ໃນໃບຮັບຮອງ ສະບັບນີ້ໂດຍບໍ່ໄດ້ຮັບອະນຸຍາດ.
- ຜູ້ກະທຳຜິດຕ້ອງໄດ້ຮັບໂທດຕາມກົດໝາຍຂອງ ສປປ ລາວ.

**<u>ຂໍ້ແນະນຳ ແລະ ເງື່ອນໄຂໃນການນຳໃຊ້:</u>**

1. ໃບຮັບຮອງບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂັ້ນລະອຽດ ສະບັບນີ້ ນຳໃຊ້ສຳລັບດຳເນີນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂັ້ນລະອຽດ ສະເພາະແຮ່ທາດ ແລະ ເນື້ອທີ່ທີ່ໄດ້ຮັບອະນຸຍາດເທົ່ານັ້ນ.
2. ກຳນົດເວລາແມ່ນໃຊ້ຕາມທີ່ໄດ້ລະບຸໄວ້ໃນໃບຮັບຮອງ.
3. ຫ້າມນຳໃຊ້ເປັນຫຼັກຊັບ.
4. ນຳໃຊ້ສະເພາະບູລິມາສິດໃຫ້ແກ່ບໍລິສັດທີ່ໄດ້ຮັບອະນຸຍາດຈາກລັດຖະບານເທົ່ານັ້ນ.
5. ໃບຮັບຮອງສະບັບນີ້ຕ້ອງຕິດໄວ້ບ່ອນທີ່ເປີດເຜີຍໃນສະຖານທີ່ດຳເນີນທຸລະກິດ ຫຼື ສຳນັກງານ.
6. ຜູ້ໄດ້ຮັບໃບຮັບຮອງນີ້ຕ້ອງໄດ້ເສຍຄ່າທຳນຽມຕາມລັດຖະບັນຍັດຂອງປະທານປະເທດ ແລະ ລະບຽບການທີ່ປະກາດໃຊ້.